# ບໍລິສັດເຄື່ອນໄຫວນອກວັດຖຸປະສົງແມ່ນຫຍັງ?

**ຂຽນໂດຍ: ທ່ານ ບົວລໍາພູ ຄໍາມະນີວົງ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ**

ບັນດາທ່ານຜູ້ອ່ານເຄີຍໄດ້ຍິນແລ້ວ ແຕ່ອາດຈະຍັງບໍ່ທັນເຂົ້າໃຈຈະແຈ້ງວ່າ: ບໍລິສັດເຄື່ອນໄຫວນອກວັດຖຸປະສົງແມ່ນບໍລິສັດທີ່ເຄື່ອນໄຫວທຸລະກິດລັກສະນະແນວໃດ? ແລະ ມີທີ່ໄປທີ່ມາເປັນແນວໃດ? ບັນດາທ່ານ ຢາກຊາບແລ້ວແມ່ນບໍ່. ໃນມື້ນີ້ ຂ້າພະເຈົ້າ ໄດ້ລວບລວມຂໍ້ມູນ ແລະ ຂໍຊີ້ແຈ້ງຕໍ່ບັນດາທ່ານຊາບວ່າ: "**ບໍລິສັດເຄື່ອນໄຫວນອກວັດຖຸປະສົງ**" ເນື້ອແທ້ ກໍ່ແມ່ນບໍລິສັດທີ່ໄດ້ຂຶ້ນທະບຽນນໍາ ກະຊວງອຸດສາຫະກໍາ ແລະ ການຄ້າ ຕາມການກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ຊຶ່ງການຂຶ້ນທະບຽນດັ່ງກ່າວ ໄດ້ລະບຸຢ່າງລະອຽດຈະແຈ້ງວ່າ ບໍລິສັດ ສາມາດເຄື່ອນໄຫວທຸລະກິດປະເພດໃດແດ່ ແລະ ໃບທະບຽນຍັງກໍານົດໄວ້ວ່າ: ຫ້າມເຄື່ອນໄຫວທຸລະກິດປະເພດອື່ນທີ່ບໍ່ໄດ້ຂຶ້ນທະບຽນ. ນອກນັ້ນແລ້ວໃນກົດລະບຽບພາຍໃນຂອງບໍລິສັດເອງ ກໍ່ຍັງໄດ້ກໍານົດແຈ້ງເຊັ່ນດຽວກັນ ກ່ຽວກັບ ວັດຖຸປະສົງຂອງບໍລິສັດ ກໍ່ຄືປະເພດທຸລະກິດທີ່ບໍລິສັດຈະດໍາເນີນການເຄື່ອນໄຫວ. ສະຫຼຸບວ່າໃບທະບຽນວິສາຫະກິດ ແລະ ກົດລະບຽບໄດ້ລະບຸໄວ້ຢ່າງຖືກຕ້ອງກົງກັນ ຕໍ່ວັດຖຸປະສົງຂອງບໍລິສັດ ແລະ ປະເພດການເຄື່ອນໄຫວທຸລະກິດ. ແຕ່ໃນຕົວຈິງ ບໍລິສັດດັ່ງກ່າວ ຊໍ້າພັດບໍ່ເຄື່ອນໄຫວໄປຕາມວັດຖຸປະສົງດັ່ງກ່າວ (ສິ່ງທີ່ອະນຸຍາດບໍ່ເຮັດໄປເຮັດແຕ່ສິ່ງທີ່ບໍ່ອະນຸຍາດ). **ຕົວຢ່າງ**: ບໍລິສັດໄດ້ຮັບອະນຸຍາດຂຶ້ນທະບຽນວິສາຫະກິດ ນໍາກະຊວງອຸດສາຫະກໍາ-ການຄ້າ ໃຫ້ເຄື່ອນໄຫວບໍລິການໃຫ້ຄໍາປຶກສາການລົງທຶນ ຫຼື ໃຫ້ບໍລິການຄໍາປຶກສາກ່ຽວກັບການສ້າງຕັ້ງ ແລະ ການດໍາເນີນທຸລະກິດ ແຕ່ຕົວຈິງຊໍ້າພັດໃຫ້ການບໍລິການລະດົມເງິນຈາກປະຊາຊົນ ໂດຍມີການໃຫ້ຜົນຕອບແທນ ເປັນດອກເບ້ຍທີ່ສູງເກີນຄວາມເປັນຈິງ ຫຼື ມີລາງວັນຂອງແຈກຂອງແຖມຫຼາຍຮູບແບບ ຫຼື ມີສິ້ນຄ້າເປັນຫຼັກປະກັນເຊັ່ນ: ທີ່ດິນ ຫຼື ລົດ ເພື່ອສ້າງແຮງຈູງໃຈ ໃຫ້ປະຊາຊົນເຂົ້າມາລົງທຶນຫຼາຍຂຶ້ນ, ການໃຫ້ຜົນຕອບແທນທີ່ສູງດັ່ງກ່າວ ເປັນຜົນຕອບແທນທີ່ບໍ່ສອດຄ່ອງກັບໂລກແຫ່ງຄວາມເປັນຈິງ ແລະ ຈະບໍ່ສາມາດດໍາລົງຄົງຕົວໄດ້ແບບຍືນຍົງ. ການກະທໍາລັກສະນະຄືແນວນັ້ນ ພວກເຮົາ ຈິ່ງເອີ້ນ ບໍລິສັດດັ່ງກ່າວ ວ່າ: "**ບໍລິສັດເຄື່ອນໄຫວນອກວັດຖຸປະສົງ**".